# ການສຳຫລວດຄວາມເພິ່ງພໍໃຈໃນການປະເມີນການຜະລິດບັນດິດເພື່ອເປັນແນວທາງການປັບປຸງຫລັກສູດ ຂອງຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ

*ພອນສະຫ້ວນ ເທບພະສຸລິນທອນ* [1], *ກິໄລສອນ ອາໃສ* [2], *ລັດດາພອນ ພະໄຊສິດທິເດດ* [3] *ແລະ ສີສະໄໝ ດວງມະນີ* [4]


## ບົດຄັດຫຍໍ້

ການວິໄຈເລື່ອງ: ການສຳຫລວດຄວາມເພິ່ງພໍໃຈໃນການປະເມີນການຜະລິດບັນດິດເພື່ອເປັນແນວທາງການປັບປຸງຫລັກສູດ ຂອງຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ໂດຍມີຈຸດປະສົງເພື່ອເປັນແນວທາງໃນການປັບປຸງຫຼັກສູດ ແລະ ໄດ້ຂໍ້ສະເໜີແນະກ່ຽວກັບການພັດທະນາຫຼັກສູດໃຫ້ແທດເໝາະກັບຄວາມຕ້ອງການຂອງທ້ອງຖິ່ນ ແລະ ສັງຄົມ. ກຸ່ມຕົວຢ່າງແມ່ນ ບັນດິດທີ່ຈົບຈາກຄະນະສຶກສາສາດ ສາຂາວິຊາຄູຄະນິດສາດ, ສາຂາວິຊາຄູພາສາອັງກິດ, ສາຂາວິຊາຄູພາສາລາວ ໃນການສຶກສາ 2015-2016 ຫາ 2018-2019 ຈຳນວນ 400 ຄົນ ເຊິ່ງໃນນັ້ນເປັນເພດຊາຍ 222 ຄົນ, ເພດຍິງ 178 ຄົນ, ມີອາຍຸ 29-45 ປີ, ຜູ້ຊົມໃຊ້ບັນດິດໃນ 4 ແຂວງພາກໃຕ້ ຈຳນວນ 10 ຄົນ ແລະ ຜູ້ຊ່ຽວຊານ ຈຳນວນ 3 ຄົນ. ເຄື່ອງມືທີ່ໃຊ້ແມ່ນ ແບບສອບຖາມ ສຳລັບບັນດິດ ແລະ ແບບສຳພາດ ສຳລັບຜູ້ຊົມໃຊ້ບັນດິດ. ວິເຄາະຂໍ້ມູນທີ່ໄດ້ຈາກການສອບຖາມໂດຍໃຊ້ສະຖິຕິເປີເຊັນ (%), ຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຕະຖານ ($SD$) ແລະ ວິເຄາະຂໍ້ມູນທີ່ໄດ້ຈາກການສຳພາດໂດຍໃຊ້ຫຼັກການວິເຄາະທາງເນື້ອໃນ (Content Analysis).

ຜົນການວິໄຈພົບວ່າ:

1. ການປະເມີນດ້ານສະພາບແວ້ດລ້ອມ ພົບວ່າ: ມີຄວາມເພິ່ງພໍໃຈຫຼາຍກວ່າໝູ່ແມ່ນການສ້າງລະບົບຖານຂໍ້ມູນຂອງຫລັກສູດ ແລະລາຍວິຊາທີ່ມີໃນປະຈຸປັນ ເຊິ່ງຢູ່ໃນລະດັບ ຫຼາຍ ມີຄ່າສະເລ່ຍ 4.11 ແລະ ຄ່າຜັນປ່ຽນມາດຕະຖານ 0.75. ໂດຍລວມແລ້ວເຫັນວ່າຄວາມເພິ່ງພໍໃຈຂອງບັນດິດຕໍ່ກັບສະພາບແວດລ້ອມຂອງຄະນະສຶກສາສາດຢູ່ໃນລະດັບ ຫຼາຍ ເຊິ່ງມີຄ່າສະເລ່ຍ $\bar{X} = 3.67$ ແລະ ຄ່າຜັນປ່ຽນມາດຕະຖານ $SD = 0.91$

2. ການປະເມີນດ້ານປັດໄຈນຳເຂົ້າ ພົບວ່າ: ວັດຖຸປະສົງຂອງຫລັກສູດ, ໂຄງສ້າງ ແລະເນື້ອໃນຂອງຫລັກສູດ, ຄຸນສົມບັດຂອງຜູ້ຮຽນ/ການສອບເສັງຄັດເລືອກ, ຄຸນສົມບັດອາຈານທີ່ສອນ/ອາຈານທີ່ປຶກສາ, ແລະງົບປະມານ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ $\bar{X}$:3.57 - 4.02, ຄ່າຜັນປ່ຽນມາດຕະຖານ $SD$:0.81 - 0.85 ສ່ວນວັດສະດຸອຸປະກອນ ແລະ ສິ່ງອຳນວຍຄວາມສະດວກຕ່າງ ໆ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ $\bar{X}$ :3.31, ຄ່າຜັນປ່ຽນມາດຕະຖານ $SD$ :0.96

3. ການປະເມີນດ້ານຂະບວນການ ພົບວ່າ: ພຶດຕິກຳການຈັດການຮຽນການສອນຂອງຄູຜູ້ສອນ, ພຶດຕິກຳການຮຽນຮູ້ຂອງຜູ້ຮຽນ, ການຝຶກປະສົບການວິຊາຊີບຄູ, ການຈັດການຮຽນ-ການສອນ, ຄຸນລັກສະນະຂອງບັນດິດທີ່ປະຕິບັດວຽກງານຕໍ່ຫນ່ວຍງານ, ທັກສະສົ່ງຜົນຕໍ່ການປະຕິບັດວຽກງານ ແລະ ບຸກຄະລິກຄະພາບທີ່ສົ່ງຜົນຕໍ່ການປະຕິບັດວຽກຂອງບັນດິດ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບ ຫຼາຍ ເຊິ່ງມີຄ່າສະເລ່ຍ $\bar{X}$:3.56 - 4.22, ຄ່າຜັນປ່ຽນມາດຕະຖານ $SD$:0.79 - 0.89 ສ່ວນຄຸນນະທຳແລະຈັນຍາບັນໃນວິຊາຊີບ ແລະ ການໃຫ້ບໍລິການແລະສະນັບສະໜູນ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບ ປານກາງ ເຊິ່ງມີຄ່າສະເລ່ຍ $\bar{X}$:3.30 - 3.43, ຄ່າຜັນປ່ຽນມາດຕະຖານ $SD$ :0.96 - 0.99


---


[1] ສຳນັກງານອະທິການທິການບໍດີ ມະຫາວິທະຍາໄລ ຈຳປາສັກ Tel: (+856)20 56852695

[2] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ

[3] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ

[4] ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ Tel: (+856)20 55047859

4. ຜົນການປະເມີນດ້ານຜົນການຜະລິດນັກສຶກສາ ໃນສົກຮຽນ 2015-2016 ຫາ 2018-2019 ທີ່ເປັນກຸ່ມຕົວຢ່າງ ຈຳນວນ 400 ຄົນ ເຊິ່ງໃນນັ້ນເຮັດວຽກສັງກັດລັດ ຈຳນວນ 381 ຄົນ ເທົ່າກັບ 95.25%, ເຮັດວຽກນຳລັດວິສາຫະກິດ 12 ຄົນ ເທົ່າກັບ 3.00% ແລະ ເຮັດທຸລະກິດສ່ວນຕົວ ຈຳນວນ 7 ຄົນ ເທົ່າກັບ 1.75% ເຫັນວ່າໂດຍລວມແລ້ວບັນດິດທີ່ຈົບຈາກຄະນະສຶກສາສາດສ່ວນໃຫຍ່ແມ່ນມີວຽກເຮັດງານທຳ.

5. ຜົນການປະເມີນດ້ານຜົນການປະຕິບັດວຽກງານຂອງບັນດິດ ແລະຄວາມເພິ່ງພໍໃຈຂອງຜູ້ນຳໃຊ້ບັນດິດແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບ ປານກາງ ເຊິ່ງມີຄ່າສະເລ່ຍ $\bar{X} = 3.46$ ແລະ ຄ່າຜັນປ່ຽນມາດຕະຖານ $SD = 0.92$

**ຄຳສຳຄັນ:** ຄວາມເພິ່ງພໍໃຈ, ຫຼັກສູດ, ການປະເມີນ

ມະຫາວິທະຍາໄລ ຈຳປາສັກ

# Investigating about quality assurance of producing grauated students in facudents in faculty of education at champ asack University

*Phonesavanh THEPPASOULITHONE, Kilaysone ASAI, Laddaphone PHAXAYSITHIDADATE and Seesamai DOUANGMANY*

**Abstract**

Case study: A satisfaction survey to evaluate the curriculum implication of Faculty of Education CU with the aim of enhancing the curriculum and making recommendations for the development of the curriculum to meet the local and social needs. The sample group is a graduate from the Faculty of Education, Department of Mathematics, English Language, and Lao language teacher 2015-2016 to 2018-2019 of whom 222 are male, 178 are female, are 29-45 years old, and have ten scholars in 10 southern provinces. The instrument used is a questionnaire for the students. And interview templates for the users. Analyze data obtained from queries using statistics (%) , average ($\bar{X}$ ), standard deviation ( $SD$ ) and data from interviews using content analysis.

The findings: The evaluation of the environment was found to be of greatest satisfaction with the development of the current database, with a mean of 4,11 and a standard deviation of 0,75. Overall, the degree of satisfaction with the academic environment was very high with an average of 3,67 and a standard deviation of 0,91. Assessment inputs meet the objectives of the curriculum, structure and content of courses, the properties tutor/advisor, and the budget is satisfactory on many levels, which average: 3.57 – 4.02, the changing standards: 0.81-0.85 of materials, equipment and facilities convenient is satisfactory in intermediate which is on average: 3.31, the changing standards.

The process evaluation found: teacher management behavior, learner learning behavior, teacher professional training, organizational learning-teaching, characteristics of working-class credentials, performance-enhancing skills, and interpersonal skills with a high level of performance: 0.79-0.89 the morale and ethics of the profession and its service and support were moderately satisfactory, with average values: 3.30-3.43, standard deviations: 0.96-0.99

Results of the 2015-2016 student-teacher productivity assessment of a sample of 400 students, of whom 381 were employed by 95.25%, employed 12 state-owned enterprises at 3.00%, and employed 7 private-sector employees with 1.75%, found that most of the graduates had a job.

The performance rating of the credit performance and the satisfaction of the end users are moderately satisfactory, with an average of 3.46 and a standard deviation of 0.92

Keywords: Satisfied, Curriculum, Assessment

## 1. ພາກສະເໜີ

ການພັດທະນານັກຮຽນໃຫ້ມີຄວາມຮູ້ຄວາມສາມາດ ມີຄຸນນະທຳ ມີຈະລິຍະທຳ ແລະຄຸນລັກສະນະສັງຄົມ ປະເທດຊາດທີ່ຕ້ອງການຈຳເປັນຕ້ອງໃຊ້ການສຶກສາເປັນເຄື່ອງມືທີ່ສຳຄັນ ແລະຜູ້ທີ່ໄດ້ຮັບການພັດທະນາຈາກການສຶກສາທີ່ດີ ຈະມີສ່ວນຊ່ວຍໃຫ້ອານາຄົດຂອງປະເທດຊາດມີຄວາມຈະເລີນກ້າວໜ້າ ການພັດທະນາການສຶກສາຂອງລາວໄດ້ເອົາໃຈໃສ່ແລະຖືເອົາການສຶກສາເປັນບາດກ້າວທີ່ສຳຄັນໃນການພັດທະນາຄົນ ແລະເປັນການຕອບໂຈດຂອງການຜະລິດຄົນຈຳນວນຢ່າງຫລວງຫລາຍ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດແຮງງານຢ່າງພຽງພໍ ຕາມແນວຄິດການພັດທະນາຄວາມຈະເລີນເຕີບໂຕທາງດ້ານເສດຖະກິດແລະສັງຄົມ ພ້ອມກັນນັ້ນກໍ່ໄດ້ສຸມທຸກສະຕິປັນຍາເຂົ້າໃນການພັດທະນາເຮັດໃຫ້ມະຫາວິທະຍາໄລແຫ່ງນີ້ນັບມື້ເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆມາ. (ອ້າງອີງໃນ ແຜນການພັດທະນາ ມະຫາວິທະຍາໄລ ຈຳປາສັກ 2019)

ຍຸດທະສາດການສຶກສາຊັ້ນສູງແຕ່ປີ 2010 ຫາ ປີ 2020 ຂະແໜງການສຶກສາໄດ້ພັດທະນາ ແລະປັບປຸງແຜນຍຸດທະສາດການສຶກສາຄືນໃໝ່ເປັນຕົ້ນການພັດທະນາບຸກຄະລາກອນໃນສະຖາບັນການສຶກສາ ແລະ ເປີດກ້ວາງລະບົບການຮຽນເພື່ອເພີ່ມປະລິມານການເຂົ້າຮຽນ, ເປີດກ້ວາງການຮ່ວມມືກັບສາກົນ ເພື່ອການພັດທະນາໂຄງລ່າງພື້ນຖານ, ແລກປ່ຽນຂໍ້ມູນຂ່າວສານ, ການຄົ້ນຄ້ວາວິທະຍາສາດ ເຕັກໂນໂລຊີ ແລະ ອື່ນ ໆ ນອກນັ້ນ, ຍັງລະບຸແນວທາງການຈັດການສຶກສາ ແລະ ຂະບວນການຮຽນຮູ້ໃຫ້ສະຖານສຶກສາ ແລະ ໜ່ວຍງານທີ່ກ່ຽວຂ້ອງໃຫ້ມຸ້ງເນັ້ນຄວາມສຳຄັນທາງດ້ານຄວາມຮູ້ ຄວາມສາມາດ ຄຸນນະທຳ ຂະບວນການຈັດການຮຽນ-ການສອນ ແລະ ຄວາມຮັບຜິດຊອບຕໍ່ສັງຄົມເພື່ອພັດທະນາຄົນໃຫ້ມີຄວາມສົມດຸນ ດັ່ງນັ້ນ, ສະຖານການສຶກສາທຸກລະດັບຈະຕ້ອງຈັດຂະບວນການຮຽນ-ການສອນມຸ້ງເນັ້ນຝຶກທັກສະການຄິດໃຫ້ການປະເຊີນກັບສະຖານະການນຳຄວາມຮູ້ມາໃຊ້ໃນການແກ້ບັນຫາ ການຈັດກິດຈະກຳໃຫ້ນັກຮຽນໄດ້ຮຽນຮູ້ຈາກປະສົບການຕົວຈິງ ຝຶກບັນດາທັກສະໃຫ້ໄດ້ຄິດເປັນ ປະຕິບັດໄດ້ ຮັກການອ່ານ ແລະ ເກີດຄ່ານິຍົມທີ່ດີງາມ ແລະ ຄຸນລັກສະນະອັນເພິ່ງປະສົງ ເພື່ອໃຫ້ນັກຮຽນເກີດການຮຽນຮູ້ ແລະ ມີຄວາມຮູ້ (ອ້າງອີງໃນ ກະຊວງສຶກສາທິການ, 2009)

ໃນສັດຕະວັດທີ 21 ແນວໂນ້ມການພັດທະນາລະບົບການສຶກສາທີ່ມີລັກສະນະການພັນທະນາການສຶກສາໄປສູ່ເສດຖະກິດຍຸກໃຫມ່ທີ່ມີເທັກໂນໂລຍີ ແລະການໃຊ້ຄວາມຮູ້ເປັນຖານໃນການພັດທະນາທີ່ເຮັດໃຫ້ປະເທດລາວຕ້ອງເລັ່ງກຽມພ້ອມໃນການສ້າງລະບົບກົນໄກ ໃນການພັດທະນາຄົນ ແລະ ຄຸນນະພາບຂອງຄົນເພື່ອພັດທະນາປະເທດຊາດໃຫ້ຈະເລີນກ້າວຫນ້າຢ່າງຢັ້ງຢືນໃນສັງຄົມໂລກ ແລະສອດຄ່ອງກັບແຜນພັດທະນາເສດຖະກິດແຫ່ງຊາດ ແລະແຜນພັດທະນາການສຶກສາແຫ່ງຊາດໃນການພັດທະນາຄົນໃຫ້ມີຄຸນນະພາບ ມີສຸຂະພາບແຂງແຮງ ມີຄຸນນະທຳ ມີລະບຽບວິໄນ ມີຄວາມຮັບຜິດຊອບ ກ້າເຮັດກ້າຮັບຜິດຊອບ ແລະພັດທະນາຄົນໃຫ້ໄດ້ຮຽນຮູ້ຕະຫລອດຊີວິດ ແລະມີວຽກເຮັດງານທຳເພື່ອໃຫ້ບັນລຸຈຸດປະສົງທີ່ວາງໄວ້ (ມີນາ, 2006) ໄດ້ກຳນົດແຜນການພັດທະນາປະເທດ ມີຄວາມຄາດຫວັງວ່າ ເມື່ອເຖິງປີ 2020 ປະເທດລາວຈະຫລຸດພົ້ນຈາກປະເທດທີ່ດ້ອຍພັດທະນາ (ອ້າງອີງໃນ ກະຊວງສຶກສາທິການ ແລະ ກິລາ ສປປ. ລາວ 2008)

Beauchamp (1981: 28) ໄດ້ກ່າວໄວ້ວ່າ ຫລັກສູດທີ່ມີຄຸນນະພາບເມື່ອນຳໄປໃຊ້ແລ້ວຕ້ອງມີການປະເມີນຢູ່ສະເໝີຫຼືເປັນໄລຍະ ໆ ເພື່ອພິຈາລະນາທົບທວນກ່ຽວກັບຄຸນນະພາບຂອງຫຼັກສູດ ໂດຍໃຊ້ວິທີການ

ວັດໃນຫລາຍແງ່ມູມ ເພື່ອນຳມາພິຈາລະນາສະຫລຸບຮ່ວມກັນວ່າ ຄຸນຄ່າຂອງຫຼັກສູດທີ່ພັດທະນານັ້ນວ່າ ມີຄຸນນະພາບຕາມວັດຖຸປະສົງທີ່ກຳນົດໄວ້ຫຼືປັບປຸງແກ້ໄຂຕໍ່ໄປ (ວິໄຊ ວົງໃຫຍ່, 2537 : 217)

ຄະນະສຶກສາສາດໄດ້ຈັດຕັ້ງການຮຽນ-ການສອນນັບແຕ່ສົກຮຽນ 2002-2003 ເປັນຕົ້ນມາ. -ໃນເບື້ອງຕົ້ນໄດ້ເປີດການຮຽນ-ການສອນໃນລະດັບປະລິນຍາຕີ ປະຈຸບັນນີ້, ຄະນະສຶກສາສາດໄດ້ຈັດຕັ້ງການເຄື່ອນໄຫວວຽກງານຕ່າງໆຕາມພາລະບົດບາດ ແລະ ໜ້າທີ່ຂອງຕົນ ແລະ ໄດ້ດຳເນີນການຮຽນ-ການສອນໃນສາຂາເຊັ່ນ ສາຂາ ຄູພາສາລາວ-ວັນນະຄະດີ, ສາຂາ ພາສາລາວທົ່ວໄປ, ສາຂາ ຄະນິດສາດ, ສາຂາ ຟີຊິກສາດ, ສາຂາ ຊີວະສາດ ແລະ ສາຂາ ຄູພາສາອັງກິດ ແລະ ສາຂາ ພາສາອັງກິດທົ່ວໄປ, ຈິ່ງເຮັດໃຫ້ຄະນະສຶກສາສາດມີການເຕີບໃຫຍ່ຂະຫຍາຍ ຕົວເປັນກ້າວໆມາ.

***ຮູບກຣາຟສະແດງສະຖິຕິນັກສຶກສາ ຄະນະສຶກສາສາດ***

***ແຕ່ສົກຮຽນ 2002-2003 ຫາສົກຮຽນ 2018-2019***




***ຮູບກຣາຟສະແດງສະຖິຕິນັກສຶກສາທີ່ຈົບຈາກຄະນະສຶກສາສາດ***

***ແຕ່ສົກຮຽນ 2006-2007 ຫາສົກຮຽນ 2018-2019***



ຈາກຂໍ້ມູນຂ້າງຂ້າງເທິງພົບວ່າ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ໄດ້ຜະລິດບັນດິດອອກໄປສູ່ສັງຄົມເປັນຈຳນວນຫຼວງຫຼາຍ ເຊິ່ງການປະຕິບັດວຽກງານ ແລະ ໜ້າທີ່ຄວາມຮັບຜິດຊອບຂອງບັນດິດ ຈະສະທ້ອນເຖິງບັນດິດທີ່ຜະລິດຈາກສະຖານະການສຶກສາທີ່ບັນດິດເຄີຍສຶກສາມາອີກ ເຊິ່ງການທີ່ບັນດິດສຳເລັດການສຶກສາ ແລະ ສາມາດນຳເອົາຄວາມຮູ້ໄປຮັບໃຊ້ໃນການເຮັດວຽກຕ່າງໆ ໄດ້ຢ່າງມີປະສິດທິພາບຫຼືບໍ່ນັ້ນ ຂຶ້ນຢູ່ກັບຫຼາຍປັດໃຈ ຫຼາຍຢ່າງປະກອບກັນ ການຮຽນ-ການສອນໃນຫຼັກສູດຕ່າງໆ ໃນມະຫາວິທະຍາໄລ ຈຳປາສັກ ລະບົບການຕິດຕາມກວດສອບ ແລະປະເມີນຜົນຄຸນນະພາບຂອງບັນດິດມີນ້ອຍ ແລະບໍ່ມີກົນໄກໃດບົ່ງບອກວ່າການຈັດການຮຽນ-ການສອນຂອງຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ມີຄຸນນະພາບຫຼືບໍ່ ເຊິ່ງເປັນການສ່ຽງຕໍ່ຄວາມເສຍຫາຍທີ່ຈະເກີດຂຶ້ນໃນໄລຍະຍາວ ນອກຈາກນັ້ນ ແນວໂນ້ມການແຂ່ງຂັນຂອງສະຖາບັນການສຶກສາຕ່າງໆ ມີຫຼາຍຂຶ້ນ ແລະຕະລາດຕ້ອງການບັນດິດທີ່ມີຄຸນນະພາບ ແລະ ມີຄວາມຮອບຮູ້ທີ່ທັນສະໄໝຫຼາຍຂຶ້ນ.

ເນື່ອງຈາກເຫດຜົນທີ່ໄດ້ກ່າວມາຂ້າງເທິງເປັນຕົ້ນຈາກການສຶກສາທິດສະດີ, ເອກະສານ ວັນນະກຳ ແລະ ງານວິໄຈທີ່ກ່ຽວຂ້ອງເຮັດໃຫ້ຄະນະຜູ້ວິໄຈສົນໃຈຢາກສຳຫລວດຄວາມເພິ່ງພໍໃຈໃນການປະເມີນການຜະລິດບັນດິດເພື່ອສຶກສາແນວທາງການປັບປຸງຫລັກສູດໃຫ້ແກ່ນັກສຶກສາຂອງຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ທັງນີ້ເພື່ອເປັນການສົ່ງເສີມໃຫ້ນັກຮຽນພັດທະນາໃຫ້ໄດ້ດີຂຶ້ນ

**1. ຈຸດປະສົງຂອງການວິໄຈ**

1.1 ເພື່ອປະເມີນຄຸນນະພາບຂອງການຜະລິດບັນດິດຂອງມະຫາວິທະຍາໄລ ຈຳປາສັກ.

1.2 ເພື່ອສຳຫຼວດຄວາມເພິ່ງພໍໃຈໃນການປະເມີນການຜະລິດບັນດິດເພື່ອສຶກສາແນວທາງການປັບປຸງຫລັກສູດໃຫ້ແກ່ນັກສຶກສາ ເປັນຕົ້ນ.

1.3 ເພື່ອສຶກສາສະຖານະຂອງບັນດິດ ມະຫາວິທະຍາໄລ ຈຳປາສັກ ເຊັ່ນ ລັກສະນະວຽກທີ່ເຮັດ, ລາຍໄດ້, ຄວາມຮູ້ທີ່ຮຽນມາໄປປະຍຸກໃຊ້ກັບໜ້າທີ່ ເປັນຕົ້ນ.

**2. ຂອບເຂດຂອງການວິໄຈ**

ການວິໄຈຄັ້ງນີ້ ມຸ້ງສຶກສາຄວາມເພິ່ງພໍໃຈຂອງບັນດິດກ່ຽວກັບຫຼັກສູດ ແລະ ສະພາບການຮຽນ-ການສອນກັບບັນດິດທີ່ສຳເລັດການສຶກສາ ຈາກຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ຈຳນວນ 3 ສາຂາວິຊາ ຄືສາຂາ ຄູຄະນິດສາດ, ຄູພາສາອັງກິດ ແລະ ຄູພາສາລາວ ໂດຍສະເພາະ 4 ແຂວງພາກໃຕ້ເປັນຕົ້ນ.

**3. ວິທີດຳເນີນການວິໄຈ**

ການວິໄຈ ເລື່ອງ ສຳຫຼວດຄວາມເພິ່ງພໍໃຈໃນການປະເມີນການຜະລິດບັນດິດເພື່ອສຶກສາແນວທາງການປັບປຸງຫລັກສູດໃຫ້ແກ່ນັກສຶກສາ ໂດຍໃຊ້ຮູບແບບການປະເມີນ (Decision making approach) CIPPI Model ຂອງ (Stufflebeam & Shinkfield, 2007: 325 - 332) ໂດຍມີການຂະຫຍາຍການປະເມີນຜົນຜະລິດ (product) ທີ່ໄດ້ຄອບຄຸມເຖິງຜົນກະທົບ (Impact) ທີ່ເກີດຂຶ້ນຕາມຫລັກສູດ ເຊິ່ງດຳເນີນການວິໄຈດັ່ງນີ້:

**4.1 ກຸ່ມປະຊາກອນ**

ກຸ່ມປະຊາກອນ ເປັນບັນດິດທີ່ຈົບການສຶກສາ ໃນ 3 ສາຂາວິຊາ ໃນຫຼັກສູດ ລະບົບ 0+4 ປີ ຈາກ ຄະນະສຶກສາສາດ ມະຫາວິທະຍາໄລ ຈຳປາສັກ ຄື: ສາຂາຄູຄະນິດສາດ, ສາຂາຄູພາສາລາວ-ວັນນະຄະດີ ແລະ ສາຂາຄູພາສາອັງກິດ ໃນສົກຮຽນ 2015-2016 ຫາ 2018-2019 ຈຳນວນ 713 ຄົນ

**4.2 ກຸ່ມຕົວຢ່າງ**

1. ບັນດິດ ສາຂາວິຊາຄູຄະນິດສາດ ສາຂາວິຊາຄູພາສາອັງກິດ ສາຂາວິຊາຄູພາສາລາວ ໃນການສຶກສາ 2015-2016 ຫາ 2018-2019 ຈຳນວນ 400 ຄົນ.

2. ຜູ້ຊົມໃຊ້ບັນດິດ (ອຳນວນການໂຮງຮຽນ, ຫົວໜ້າສຶກສາແຂວງ ແລະ ຕ່າງໜ້າສຶກສາແຂວງໃນ 4 ແຂວງພາກໃຕ້) ຈຳນວນ 10 ຄົນ.

**4. ເຄື່ອງມືທີ່ໃຊ້ໃນການວິໄຈ**

ເຄື່ອງມືທີ່ໃຊ້ໃນການວິໄຈຄັ້ງນີ້ ປະກອບມີ 2 ຊຸດ ຄື:

1. ແບບສອບຖາມ: ໃຊ້ສອບຖາມຄວາມເພິ່ງພໍໃຈກ່ຽວກັບຫລັກສູດຂອງການສ້າງບັນດິດຂອງຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ໃນປະເດັນກ່ຽວກັບດ້ານສະພາບແວດລ້ອມ ດ້ານປັດໃຈນຳເຂົ້າ ດ້ານຂະບວນການ ແລະ ດ້ານຜົນຜະລິດ ລັກສະນະຂໍ້ຄຳຖາມແບບ (Rating Scale) 5 ລະດັບ ໂດຍປະເມີນຄວາມເຫມາະສົມຂອງຫຼັກສູດຈາກຫຼາຍທີ່ສຸດ ເຖິງ ໜ້ອຍທີ່ສຸດ

2. ແບບສຳພາດ: ໃຊ້ສຳລັບສອບຖາມແລະສຳພາດຄວາມເພິ່ງພໍໃຈຂໍ້ມູນກ່ຽວກັບຫລັກສູດການສ້າງຂອງບັນດິດຄະນະສຶກສາສາດ ມະຫາວິທະຍາໄລຈຳປາສັກ ເຊິ່ງມີເນື້ອໃນກ່ຽວກັບຄຸນສົມບັດຂອງບັນດິດ ແລະ ຄວາມເພິ່ງພໍໃຈຕໍ່ບັນດິດ ລັກສະນະຄຳຖາມເປັນແບບ (Rating Scale) 5 ລະດັບ ເປັນແບບສອບຖາມແບບປາຍເປີດ

**5. ການສ້າງແລະພັດທະນາເຄື່ອງມື**

ຄະນະຜູ້ວິໄຈໄດ້ສ້າງແລະພັດທະນາເຄື່ອງມືທີ່ໃຊ້ໃນການວິໃຊຄັ້ງນີ້ປະກບອດ້ວຍ ແບບສອບຖາມ ແລະ ແບບສຳພາດ ໂດຍຂັ້ນຕອນການສ້າງແລະພັດທະນາເຄື່ອງມື ດັ່ງນີ້:

1. ສຶກສາຮູບແບບການປະເມີນ CIPPI Model ຂອງ Stufflebeam
2. ອອກແບບເຄື່ອງມືປະເມີນ ແລະ ສ້າງຂໍ້ຄຳຖາມຕາມໂຄງສ້າງການປະເມີນ
3. ກວດສອບຄວາມທ່ຽງຕົງຂອງເນື້ອໃນ (Content Validity) ໂດຍຜູ້ຊ່ຽວຊານ ດ້ານການຮຽນ-ການສອນ ແລະດ້ານການວັດປະເມີນຜົນ ຈຳນວນ 5 ທ່ານ ແລ້ວນຳມາປັບປຸງແກ້ໄຂຕາມຂໍ້ສະເໜີແນະ
4. ທົດລອງການໃຊ້ເຄື່ອງມື ໂດຍນຳໄປໃຊ້ກັບກຸ່ມຜູ້ໃຫ້ຂໍ້ມູນທີ່ບໍ່ເປັນກຸ່ມຕົວຢ່າງ ເພື່ອສຶກສາຜົນການໃຊ້ ແລະນຳມາປັບປຸງໃຫ້ສົມບູນຍິ່ງຂຶ້ນ.
5. ຈັດພິມເຄື່ອງມືສະບັບສົມບູນແລ້ວນຳລົງສູ່ການເກັບຂໍ້ມູນກັບກຸ່ມຕົວຢ່າງ.

**6. ການເກັບຮອບຮອມຂໍ້ມູນ**

1. ຄະນະຜູ້ວິໄຈໄດ້ຕິດຕໍ່ຂໍຄວາມຮ່ວມມືຈາກພະແນກສຶກສາ 4 ແຂວງກ່ອນລົງເກັບກຳຂໍ້ມູນດ້ວຍຄະນະຜູ້ວິໄຈເອງ ແລະຂໍຄວາມມືຈາກອຳນວຍການໂຮງຮຽນ ທີ່ມີບັນດິດສັງກັດຢູ່ໃນຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃນການເກັບແບບສອບຖາມ ແລະການສຳພາດ.

2. ຄະນະຜູ້ວິໄຈເກັບຮັບໂຮມຈາກກຸ່ມເປົ້າໝາຍຕາມທີ່ໄດ້ແຈກຢາຍ ແລະ ກວດສອບແບບສອບຖາມທີ່ສົມບູນແລ້ວ ໄດ້ແບບສອບຖາມຄືນມາຈຳນວນ 400 ຊຸດ ຄິດເປັນເປີເຊັນ 100% ຂອງຈຳນວນທັງໝົດ.

**7. ການວິເຄາະຂໍ້ມູນແລະສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນ**

ສຳລັບຂໍ້ມູນທີ່ໄດ້ຈາກແບບສອບຖາມ: ສະຖິຕິທີ່ໃຊ້ໃນການວິເຄາະຂໍ້ມູນແມ່ນສະຖິຕິບັນຍາຍໄດ້ແກ່: ເປີເຊັນ (P), ຄ່າສະເລ່ຍ, ຄ່າຜັນປ່ຽນມາດຖານ (S.D) ແລ້ວນຳຄ່າສະເລ່ຍທີ່ໄດ້ໄປປຽບທຽບກັບເກນຂອງ Best (1981)

ສຳລັບຂໍ້ມູນທີ່ໄດ້ຈາກການສຳພາດໃຊ້ຫຼັກການວິເຄາະເນື້ອໃນ (Content Analysis) ໂດຍການສະຫຼຸບເອົາປະເດັນທີ່ສຳຄັນຈາກການສຳພາດ.

**8. ຜົນການສຶກສາ**

ການວິໄຈໃນຄັ້ງນີ້ເປັນການວິໄຈແບບປະສານວິທີ (Mixed-Method) ມີຈຸດປະສົງເພື່ອປະເມີນຄຸນນະພາບຂອງການຜະລິດບັນດິດຂອງມະຫາວິທະຍາໄລ ຈຳປາສັກ, ເພື່ອສຳຫຼວດຄວາມເພິ່ງພໍໃຈໃນການປະເມີນການຜະລິດບັນດິດເພື່ອສຶກສາແນວທາງການປັບປຸງຫລັກສູດໃຫ້ແກ່ນັກສຶກສາ ແລະ ເພື່ອສຶກສາສະຖານະຂອງບັນດິດ ມະຫາວິທະຍາໄລ ຈຳປາສັກ ເຊັ່ນ ລັກສະນະວຽກທີ່ເຮັດ, ລາຍໄດ້, ຄວາມຮູ້ທີ່ຮຽນມາໄປປະຍຸກໃຊ້ກັບໜ້າທີ່ວຽກງານ. ຄະນະຜູ້ວິໄຈນຳສະເໜີຜົນການວິເຄາະຂໍ້ມູນອອກເປັນ 3 ພາກສ່ວນ ຄື:

**8.1 ຜົນການວິເຄາະຂໍ້ມູນທົ່ວໄປ**

- ຈຳນວນຕົວຢ່າງທີ່ເປັນເພດຊາຍມີຈຳນວນຫຼາຍກວ່າເພດຍິງ ເຊິ່ງເພດຊາຍລວມມີ 222 ຄົນ ເທົ່າກັບ 55.50% ແລະ ເພດຍິງມີ 178 ຄົນ ເທົ່າກັບ 44.50% .

- ຈຳນວນຕົວຢ່າງທີ່ມີອາຍຸ 29 ປີ ມີ 14 ຄົນ ເທົ່າກັບ 3.5%, ອາຍຸ 30 ປີ ມີ 80 ຄົນ ເທົ່າກັບ 20%, ອາຍຸ 31 ປີ ມີ 33 ຄົນ ເທົ່າກັບ 8.25%, ອາຍຸ 32 ປີ ມີ 41 ຄົນ ເທົ່າກັບ 10.25%, ອາຍຸ 33 ປີ ມີ 34 ຄົນ ເທົ່າກັບ 8.50%, ອາຍຸ 34 ປີ ມີ 27 ຄົນ ເທົ່າກັບ 6.75%, ອາຍຸ 35 ປີ ມີ 69 ຄົນ ເທົ່າກັບ 17.25%, ອາຍຸ 36 ປີ ມີ 22 ຄົນ ເທົ່າກັບ 5.50%, ອາຍຸ 37 ປີ ມີ 29 ຄົນ ເທົ່າກັບ 7.25%, ອາຍຸ 38 ປີ ມີ 11 ຄົນ ເທົ່າກັບ 2.75%, ອາຍຸ 39 ປີ ມີ 4 ຄົນ ເທົ່າກັບ 1.00%, ອາຍຸ 40 ປີ ມີ 24 ຄົນ ເທົ່າກັບ 6.00%, ອາຍຸ 42 ປີ ມີ 7 ຄົນ ເທົ່າກັບ 1.75%, ອາຍຸ 45 ປີ ມີ 5 ຄົນ ເທົ່າກັບ 1.25%

- ຈຳນວນຕົວຢ່າງທີ່ຮຽນຈົບລະດັບປະລິນຍາຕີ ທີ່ເປັນຄູຄະນິດສາດ ມີ 138 ຄົນ ເທົ່າກັບ 34.50%, ທີ່ເປັນຄູພາສາລາວແລະວັນນະຄະດີ ມີ 127 ເທົ່າກັບ 31.75%, ທີ່ເປັນຄູພາສາອັງກິດ ມີ 111 ເທົ່າກັບ 27.75%. ຈຳນວນຕົວຢ່າງທີ່ຮຽນຈົບລະດັບປະລິນຍາໂທ ທີ່ເປັນຄູຄະນິດສາດ ມີ 8 ຄົນ ເທົ່າກັບ 2.00%, ທີ່ເປັນຄູພາສາລາວແລະວັນນະຄະດີ ມີ 6 ເທົ່າກັບ 1.50%, ທີ່ເປັນຄູພາສາອັງກິດ ມີ 10 ເທົ່າກັບ 2.50%.

- ຈຳນວນຕົວຢ່າງທີ່ຍັງບໍ່ທັນໄດ້ເຮັດວຽກ ມີ 10 ຄົນ ເທົ່າກັບ 2.50%, ລໍຟັງຄຳຕອບຢູ່ ມີ 17 ຄົນ ເທົ່າກັບ 4.25%, ຍັງບໍ່ທັນຢາກເຂົ້າວຽກ ມີ 12 ຄົນ ເທົ່າກັບ 3.00 %, ລໍຖ້າໄປສຶກສາຕໍ່ ມີ 177 ຄົນ ເທົ່າກັບ 44.25%, ອື່ນ ໆ (ໄດ້ເຮັດວຽກແລ້ວ) ມີ 184 ຄົນ ເທົ່າກັບ 46.00%

- ຈຳນວນຕົວຢ່າງທີ່ມີພູມລຳເນົາຢູ່ແຂວງ ຈຳປາສັກ ມີ 112 ຄົນ ເທົ່າກັບ 28.00%, ມີພູມລຳເນົາຢູ່ແຂວງ ສາລະວັນ ມີ 106 ຄົນ ເທົ່າກັບ 26.50%, ມີພູມລຳເນົາຢູ່ແຂວງ ເຊກອງ ມີ 87 ຄົນ ເທົ່າກັບ 21.75% ແລະ ມີພູມລຳເນົາຢູ່ແຂວງ ອັດຕະປື ມີ 95 ຄົນ ເທົ່າກັບ 23.75%.

- ຈຳນວນຕົວຢ່າງທີ່ໃຊ້ສື່ໃນການຄົ້ນຫາບ່ອນເຮັດວຽກ ເຊິ່ງມີພາກສ່ວນຕ່າງໆຄື: ມະຫາວິທະຍາໄລ ມີ 15 ຄົນ ເທົ່າກັບ 3.75%, ໝູ່ເພື່ອນ, ສື່ອອນລາຍຕ່າງໆ ມີ 125 ຄົນ ເທົ່າກັບ 31.25%, ຄອບຄົວ ມີ 199

ເທົ່າກັບ 49.75%, ໜັງສືພິມ/ວາລະສານ ມີ 10 ເທົ່າກັບ 2.5%, ວິທະຍຸ/ທໍລະທັດ ມີ 4 ຄົນ ເທົ່າກັບ 1.00%, ຣຸ່ນ ເອື້ອຍ/ອ້າຍ ມີ 36 ຄົນ ເທົ່າກັບ 9.00%, ອື່ນໆ ມີ 11 ຄົນ ເທົ່າກັບ 2.75%

- ຈຳນວນຕົວຢ່າງທີ່ເຮັດວຽກສັງກັດລັດ ມີ 381 ຄົນ ເທົ່າກັບ 95.25%, ເຮັດວຽກນຳລັດວິສາຫະກິດ ມີ 12 ຄົນ 3.00%, ເຮັດທຸລະກິດສ່ວນຕົວ ມີ 7 ຄົນ ເທົ່າກັບ 1.75%
- ຈຳນວນຕົວຢ່າງທີ່ມີປະສົບການໃນການສອນ ແລະການເຮັດວຽກ ນ້ອຍກວ່າ 3 ປີ ມີ 28 ຄົນ ເທົ່າກັບ 7.00%, 4 - 5 ປີ ມີ 41 ຄົນ 10.25%, 6 - 7 ປີ ມີ 198 ຄົນ 49.50%, 8 ປີ ຂຶ້ນໄປ ມີ 133 ຄົນ ເທົ່າກັບ 33.25%
- ຈຳນວນຕົວຢ່າງທີ່ມີລາຍໄດ້ຕໍ່ເດືອນ 1,500,000 ກີບ - 2,000,000 ກີບ ມີ 305 ຄົນ ເທົ່າກັບ 76.25%, ຫຼາຍກວ່າ 2,000,000 ກີບ ມີ 95 ຄົນ ເທົ່າກັບ 23.75%

**8.2 ຜົນການວິເຄາະຈໍ້ມູນຄວາມເພິ່ງພໍໃຈຂອງບັນດິດເພື່ອສົ່ງເສີມການພັດທະນາຫຼັກສູດການຮຽນ-ການສອນຂອງຄະນະສຶກສາສາດ**

1. ການປະເມີນດ້ານສະພາບແວ້ດລ້ອມ

| ລ/ດ | ລາຍການປະເມີນ | ຄ່າສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ຄວາມໝາຍ |
|---|---|---|---|---|
| 1 | ມີການສ້າງລະບົບຖານຂໍ້ມູນຂອງຫລັກສູດ ແລະລາຍວິຊາທີ່ມີໃນປະຈຸບັນ | 4.11 | 0.75 | ຫຼາຍ |
| 2 | ມີການກຳນົດເປົ້າໝາຍຂອງການວາງແຜນ ແລະ ການຕິດຕາມການຮຽນການສອນຕະຫລອດຫລັກສູດທຸກລາຍວິຊາຮ່ວມກັນລະຫວ່າງອາຈານ | 3.80 | 0.80 | ຫຼາຍ |
| 3 | ມີການກຳນົດຂະໜາດຫ້ອງຮຽນ ແລະ ກຸ່ມຮຽນທີ່ເຫມາະສົມແຕ່ລະລາຍວິຊາ | 4.00 | 0.71 | ຫຼາຍ |
| 4 | ສົ່ງເສີມສະນັບສະນຸນການຈັດຫາແຫລ່ງການຮຽນຮູ້ ແລະແຫລ່ງຝຶກປະສົບການຕາມຫລັກສູດ | 3.76 | 0.73 | ຫຼາຍ |
| 5 | ການຈັດເອົາອາຈານເຂົ້າສອນໃນແຕ່ລະລາຍວິຊາກົງກັບຄວາມຮູ້ ຄວາມສາມາດ ແລະປະສົບການ | 3.53 | 0.75 | ຫຼາຍ |
| 6 | ມີການຈັດໂຄງການກິດຈະກຳທີ່ສົ່ງເສີມການຈັດກຳຮຽນການສອນໃນລາຍວິຊາ | 3.40 | 1.07 | ປານກາງ |
| 7 | ຈັດນັກສຶກສາໃຫ້ລົງທະບຽນຮຽນຕາມລາຍວິຊາ ແລະກຸ່ມວິຊາຢ່າງເຫມາະສົມ | 3.51 | 0.90 | ຫຼາຍ |
| 8 | ນັກສຶກສາມີສ່ວນຮ່ວມໃນການກຳນົດເກນ ແລະ ວິທີການປະເມີນສອນຂອງອາຈານ ໃນແຕ່ລະລາຍວິຊາ | 3.33 | 1.06 | ປານກາງ |
| 9 | ມີການຮ່ວມມືລະຫວ່າງນັກສຶກສາ ອາຈານ ໃນການຝຶກປະສົບການວິຊາຊີບຄູ | 3.62 | 0.99 | ຫຼາຍ |
| | **ລວມ** | **3.67** | **0.91** | **ຫຼາຍ** |

ການປະເມີນດ້ານສະພາບແວ້ດລ້ອມ ພົບວ່າ: ມີຄວາມເພິ່ງພໍໃຈຫຼາຍກວ່າໝູ່ແມ່ນການສ້າງລະບົບຖານຂໍ້ມູນຂອງຫລັກສູດ ແລະລາຍວິຊາທີ່ມີໃນປະຈຸບັນ ເຊິ່ງຢູ່ໃນລະດັບ ຫຼາຍ ມີຄ່າສະເລ່ຍ 4.11 ແລະ ຄ່າ

ພົນປ່ຽນມາດຕະຖານ 0.75. ໂດຍລວມແລ້ວເຫັນວ່າຄວາມເພິ່ງພໍໃຈຂອງບັນດິດຕໍ່ກັບສະພາບແວດລ້ອມຂອງຄະນະສຶກສາສາດຢູ່ໃນລະດັບ ຫຼາຍ ເຊິ່ງມີຄ່າສະເລ່ຍ $\bar{X} = 3.67$ ແລະ ຄ່າພົນປ່ຽນມາດຕະຖານ $SD = 0.91$

2. ການປະເມີນດ້ານປັດໄຈນໍາເຂົ້າ

| ລ/ດ | ລາຍການປະເມີນ | ຄ່າສະເລ່ຍ | ຄ່າພົນປ່ຽນມາດຕະຖານ | ຄວາມໝາຍ |
|---|---|---|---|---|
| 1 | ວັດຖຸປະສົງຂອງຫລັກສູດ | 3.57 | 0.85 | ຫຼາຍ |
| 2 | ໂຄງສ້າງ ແລະເນື້ອໃນຂອງຫລັກສູດ | 3.75 | 0.83 | ຫຼາຍ |
| 3 | ຄຸນສົມບັດຂອງຜູ້ຮຽນ/ການສອບເສັງຄັດເລືອກ | 3.86 | 0.85 | ຫຼາຍ |
| 4 | ຄຸນສົມບັດອາຈານທີ່ສອນ/ອາຈານທີ່ປຶກສາ | 3.73 | 0.82 | ຫຼາຍ |
| 5 | ວັດສະດຸອຸປະກອນ ແລະ ສິ່ງອໍານວຍຄວາມສະດວກຕ່າງ ໆ | 3.31 | 0.96 | ປານກາງ |
| 6 | ງົບປະມານ | 4.02 | 0.81 | ຫຼາຍ |
| | **ລວມ** | **3.71** | **0.85** | **ຫຼາຍ** |

ການປະເມີນດ້ານປັດໄຈນໍາເຂົ້າ ພົບວ່າ: ວັດຖຸປະສົງຂອງຫລັກສູດ, ໂຄງສ້າງ ແລະເນື້ອໃນຂອງຫລັກສູດ, ຄຸນສົມບັດຂອງຜູ້ຮຽນ/ການສອບເສັງຄັດເລືອກ, ຄຸນສົມບັດອາຈານທີ່ສອນ/ອາຈານທີ່ປຶກສາ, ແລະ ງົບປະມານ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍ ເຊິ່ງມີຄ່າສະເລ່ຍ $\bar{X}$:3.57 - 4.02, ຄ່າພົນປ່ຽນມາດຕະຖານ $SD$:0.81 - 0.85 ສ່ວນວັດສະດຸອຸປະກອນ ແລະ ສິ່ງອໍານວຍຄວາມສະດວກຕ່າງ ໆ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບປານກາງ ເຊິ່ງມີຄ່າສະເລ່ຍ $\bar{X}$ :3.31, ຄ່າພົນປ່ຽນມາດຕະຖານ $SD$ :0.96

3. ການປະເມີນດ້ານຂະບວນການ

| ລ/ດ | ລາຍການປະເມີນ | ຄ່າສະເລ່ຍ | ຄ່າພົນປ່ຽນມາດຕະຖານ | ຄວາມໝາຍ |
|---|---|---|---|---|
| 1 | ພຶດຕິກໍາການຈັດການຮຽນການສອນຂອງຄູຜູ້ສອນ | 4.14 | 0.88 | ຫຼາຍ |
| 2 | ພຶດຕິກໍາການຮຽນຮູ້ຂອງຜູ້ຮຽນ | 4.22 | 0.83 | ຫຼາຍ |
| 3 | ການຝຶກປະສົບການວິຊາຊີບຄູຂອງຄະນະສຶກສາສາດ | 3.82 | 0.89 | ຫຼາຍ |
| 4 | ການຈັດການຮຽນ-ການສອນ | 3.83 | 0.79 | ຫຼາຍ |
| 5 | ການໃຫ້ບໍລິການ ແລະສະນັບສະໜູນ | 3.30 | 0.99 | ປານກາງ |
| 6 | ຄຸນລັກສະນະຂອງບັນດິດທີ່ປະຕິບັດວຽກງານຕໍ່ຫນ່ວຍງານ | 3.79 | 0.82 | ຫຼາຍ |
| 7 | ທັກສະສົ່ງຜົນຕໍ່ການປະຕິບັດວຽກງານຂອງບັນດິດ | 3.82 | 0.86 | ຫຼາຍ |
| 8 | ບຸກຄະລິກຄະພາບທີ່ສົ່ງຜົນຕໍ່ການປະຕິບັດວຽກຂອງບັນດິດ | 3.56 | 0.89 | ຫຼາຍ |
| | **ລວມ** | **3.81** | **0.87** | **ຫຼາຍ** |

ການປະເມີນດ້ານຂະບວນການ ພົບວ່າ: ພຶດຕິກຳການຈັດການຮຽນການສອນຂອງຄູຜູ້ສອນ, ພຶດຕິກຳການຮຽນຮູ້ຂອງຜູ້ຮຽນ, ການຝຶກປະສົບການວິຊາຊີບຄູ, ການຈັດການຮຽນ-ການສອນ, ຄຸນລັກສະນະຂອງບັນດິດທີ່ປະຕິບັດວຽກງານຕໍ່ຫນ່ວຍງານ, ທັກສະສິ່ງຜົນຕໍ່ການປະຕິບັດວຽກງານ ແລະ ບຸກຄະລິກຄະພາບທີ່ສົ່ງຜົນຕໍ່ການປະຕິບັດວຽກຂອງບັນດິດ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບ ຫຼາຍ ເຊິ່ງມີຄ່າສະເລ່ຍ $\bar{X}$:3.56 - 4.22, ຄ່າຜັນປ່ຽນມາດຕະຖານ $SD$:0.79 - 0.89 ສ່ວນຄຸນນະທຳແລະຈັນຍາບັນໃນວິຊາຊີບ ແລະ ການໃຫ້ບໍລິການແລະສະນັບສະໜູນ ແມ່ນມີຄວາມເພິ່ງພໍໃຈຢູ່ໃນລະດັບ ປານກາງ ເຊິ່ງມີຄ່າສະເລ່ຍ ເຊິ່ງມີຄ່າສະເລ່ຍ $\bar{X}$:3.30 - 3.43, ຄ່າຜັນປ່ຽນມາດຕະຖານ $SD$:0.96 - 0.99

4. ຜົນການປະເມີນດ້ານຜົນການຜະລິດນັກສຶກສາ

| **ລຳດັບ** | **ບ່ອນເຮັດວຽກ** | **ຈຳນວນຕົວຢ່າງ** | **ຄິດໄລ່ເປັນເປີເຊັນ** |
|---|---|---|---|
| 1 | ສັງກັດລັດ | 381 | 95.25 |
| 2 | ລັດວິສາຫະກິດ | 12 | 3.00 |
| 3 | ທຸລະກິດສ່ວນຕົວ | 7 | 1.75 |
| 4 | ອື່ນ ໆ | 0 | 0 |
| | **ລວມ** | **400** | **100** |

ຜົນການປະເມີນດ້ານຜົນການຜະລິດນັກສຶກສາໃນສົກ ໃນສົກຮຽນ 2015-2016 ຫາ 2018-2019 ທີ່ເປັນກຸ່ມຕົວຢ່າງ ຈຳນວນ 400 ຄົນ ເຊິ່ງໃນນັ້ນເຮັດວຽກສັງກັດລັດ ຈຳນວນ 381 ຄົນ ເທົ່າກັບ 95.25%, ເຮັດວຽກນຳລັດວິສາຫະກິດ 12 ຄົນ ເທົ່າກັບ 3.00% ແລະ ເຮັດທຸລະກິດສ່ວນຕົວ ຈຳນວນ 7 ຄົນ ເທົ່າກັບ 1.75% ເຫັນວ່າໂດຍລວມແລ້ວບັນດິດທີ່ຈົບຈາກຄະນະສຶກສາສາດສ່ວນໃຫຍ່ແມ່ນມີວຽກເຮັດງານທຳ.

5. ຜົນການປະເມີນດ້ານຜົນການປະຕິບັດວຽກງານຂອງບັນດິດ ແລະຄວາມເພິ່ງພໍໃຈຂອງຜູ້ນຳໃຊ້ບັນດິດ

| **ລ/ດ** | **ລາຍການປະເມີນ** | **ຄ່າສະເລ່ຍ** | **ຄ່າຜັນປ່ຽນມາດຕະຖານ** | **ຄວາມໝາຍ** |
|---|---|---|---|---|
| 1 | ມີຜົນສຳເລັດຕາມວຽກງານທີ່ມອບຫມາຍ | 3.41 | 0.86 | ປານກາງ |
| 2 | ມີຜົນງານທີ່ເປັນຫນ້າເພິ່ງພໍໃຈ ແລະເປັນປະໂຫຍດຕໍ່ຫນ່ວຍງານທີ່ກ່ຽວຂ້ອງ | 3.23 | 0.98 | ປານກາງ |
| 3 | ມີການນຳຜົນງານທີ່ຕົນເອງຮັບຜິດຊອບມາປັບປຸງຢ່າງຕໍ່ເນື່ອງ | 3.76 | 0.83 | ຫຼາຍ |
| | **ລວມ** | **3.46** | **0.92** | **ປານກາງ** |

ຜົນການປະເມີນດ້ານຜົນການປະຕິບັດວຽກງານຂອງບັນດິດ ແລະຄວາມເພິ່ງພໍໃຈຂອງຜູ້ນຳໃຊ້ບັນດິດ ມີຄວາມຄິດເຫັນຫຼາຍກວ່າໝູ່ແມ່ນມີການນຳຜົນງານທີ່ຕົນເອງຮັບຜິດຊອບມາປັບປຸງຢ່າງຕໍ່ເນື່ອງ ເຊິ່ງຢູ່ໃນລະດັບ ຫຼາຍ ມີຄ່າສະເລ່ຍ 3.76 ແລະ ຄ່າຜັນປ່ຽນມາດຕະຖານ 0.83. ໂດຍລວມແລ້ວເຫັນວ່າ ຄວາມຄິດເຫັນຂອງ

ບັນດິດຕໍ່ກັບປັດໃຈນຳເຂົ້າ (Input) ດ້ານຂະບວນການ: ຜົນການປະຕິບັດວຽກງານຂອງບັນດິດ ແລະຄວາມເພິ່ງພໍໃຈຂອງຜູ້ນຳໃຊ້ບັນດິດຢູ່ໃນລະດັບ ປານກາງ ເຊິ່ງມີຄ່າສະເລ່ຍ 3.46 ແລະ ຄ່າຜັນປ່ຽນມາດຕະຖານ 0.92

### 8.3 ຜົນການວິເຄາະຂໍ້ມູນຈາກການສຳພາດ

ຈາກຜົນການວິເຄາະຂໍ້ມູນຈາກການສຳພາດດ້ວຍວິທີວິເຄາະເນື້ອໃນ (Content Analysis) ສາມາດສະຫຼຸບບັນຫາທີ່ສຳຄັນໃນການປະເມີນການຜະລິດບັນດິດ ດັ່ງນີ້:

1. ສື່ການສອນທີ່ນຳໃຊ້ໃນການຮຽນ-ການສອນຍັງບໍ່ພຽງພໍ ເຊັ່ນ: ປຶ້ມຕຳລາ... ແລະ ເນື້ອໃນບົດຮຽນຍັງບໍ່ທັນສະໄໝ
2. ລະດັບຄວາມຮູ້ຄວາມສາມາດຂອງບຸກຄະລາກອນຄູສອນຍັງບໍ່ທັນສູງເທົ່າທີ່ຄວນ
3. ການຝຶກປະຕິບັດຕົວຈິງໃນລາຍວິຊາຍັງມີໜ້ອຍ ໂດຍສະເພາະແມ່ນວິຊາທີ່ເປັນວິຊາຄູ ເຊັ່ນ: ປະສົບການວິຊາຊີບຄູ, ສຶກສາສາດ...
4. ການລົງປະສົບການກ່ອນການລົງຝຶກຫັດຕົວຈິງແມ່ນມີໜ້ອຍ ເຮັດໃຫ້ນັກສຶກສາຂາດປະສົບການ, ຄວາມສາມາດ ແລະ ທັກສະບໍ່ທັນສູງເທົ່າທີ່ຄວນ ເວລາລົງຝຶກຫັດ
5. ຄວາມຮູ້ທາງດ້ານພາສາອັງກິດ ແລະ ຄອມພິວເຕີຍັງບໍ່ສູງເທົ່າທີ່ຄວນ
6. ສະພາບແວດລ້ອມພາຍໃນເດີ່ນໂຮງຮຽນຍັງບໍ່ທັນດຶງດູດຈິດໃຈຜູ້ຮຽນ ບໍ່ມີສະຖານທີ່ພັກຜ່ອນເວລາເລີກຮຽນ
7. ອາຄານຮຽນຍັງຂາດສິ່ງອຳນວຍຄວາມສະດວກຫຼາຍຢ່າງແກ່ການຮຽນ ເຊັ່ນ: ກະດານບາງຫ້ອງກໍມີແຜ່ນດຽວ, ໂປຣເຈັກເຕີ...
8. ຫໍພັກຍັງບໍ່ທັນພຽງພໍກັບຈຳນວນນັກສຶກສາ
9. ຫ້ອງນ້ຳຍັງບໍ່ທັນສະອາດເທົ່າທີ່ຄວນ
10. ຫ້ອງສະໝຸດມີປຶ້ມຕຳລາຫຼາຍ ແຕ່ຍັງບໍ່ສອດຄ່ອງກັບຫຼັກສູດທີ່ຮຽນປານໃດ ແລະ ປຶ້ມຕຳລາສ່ວນໃຫຍ່ເປັນພາສາອັງກິດ
11. ຢາກໃຫ້ມີບ່ອນຝຶກປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ ເຊັ່ນ: ໂຮງຮຽນລົງປະສົບການ, ຫ້ອງຄອມພິວເຕີ, ຫ້ອງທົດລອງ, ຫ້ອງຟັງສຽງ...
12. ຫຼຸດຈຳນວນວິຊາທີ່ເປັນທິດສະດີ, ວິຊາທີ່ບໍ່ກ່ຽວຂ້ອງກັບຫຼັກສູດ ແລະ ເພີ່ມວິຊາຫຼັກ ແລະການປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ
13. ຄຽງຄູ່ກັບການຮຽນ-ການສອນ ວຽກງານກິລາກໍສຳຄັນ ຄວນປັບປຸງໃຫ້ມີສະໜາມກິລາຫຼາຍປະເພດ ເຊັ່ນ: ເດີ່ນເຕະບານ, ເດີ່ນບານຕີ...

## 9. ຂໍ້ສະເໜີແນະ

ດ້ານຫຼັກສູດທັງສາມສາຂາວິຊາ ຄື: ຫຼັກສູດຄູຄະນິດສາດ, ຫຼັກສູດຄູພາສາລາວ-ວັນນະຄະດີ ແລະ ຫຼັກສູດຄູພາສາອັງກິດ ຍັງມີຄວາມສອດຄ່ອງກັບວຽກງານ ແຕ່ສິ່ງທີ່ຕອບສະໜອງໃຫ້ການຮຽນ-ການສອນມີປະສິດທິພາບຄະນະສຶກສາສາດຄວນມີການປັບປຸງໃນດ້ານຕ່າງດັ່ງນີ້:

1. ປັບປຸງທາງດ້ານສື່ທີ່ນຳໃຊ້ໃນການຮຽນ-ການສອນໃຫ້ພຽງພໍກັບຄວາມຕ້ອງການ ເຊັ່ນ: ປຶ້ມຕຳລາ... ແລະ ເນື້ອໃນບົດຮຽນໃຫ້ມີຄວາມໃໝ່ສອດຄ່ອງກັບປະຈຸບັນ.

2. ຍົກລະດັບຄວາມຮູ້ຄວາມສາມາດຂອງຄູອາຈານໃຫ້ສູງຂຶ້ນ ເນື່ອງຈາກວ່າຄູສ່ວນໃຫຍ່ທີ່ສອນຫຼັກສູດປະລິນຍາຕີຍັງແມ່ນຄູທີ່ຈົບປະລິນຍາຕີ.

3. ຫຼຸດວິຊາຮຽນທີ່ເປັນທິດສະດີ ເພີ່ມພາກປະຕິບັດຕົວຈິງໃນການຮຽນ-ການສອນໃຫ້ຫຼາຍຂຶ້ນ ເຊັ່ນ: ມີການລົງປະສົບການ, ການປະຕິບັດຕົວຈິງໃຫ້ຫຼາຍຂຶ້ນ, ມີຫ້ອງຄອມພິວເຕີ, ມີຫ້ອງທົດລອງ, ມີຫ້ອງຟັງສຽງ... ເພື່ອເພີ່ມທັກສະໃນການຮຽນໃຫ້ນັກສຶກສາ.

4. ປັບປຸງສະພາບແວດລ້ອມຂອງຄະນະສຶກສາສາດໃຫ້ເອື້ອອໍານວຍຕໍ່ການສຶກສາຮໍ່າຮຽນ ເຊັ່ນ: ມີຕົ້ນໄມ້, ມີຫ້ອງນໍ້າທີ່ສະອາດ...

## ເອກະສານອ້າງອີງ


ການຈະນາ ມະນີແສງ .(2538). ການປະເມີນຫລັກສູດການສຶກສາບັນດິດຂອງມະຫາວິທະຍາໄລບູລະພາ ລາຍງານການວິໃຈ ຄະນະສຶກສາສາດມະຫາວິທະຍາໄລຈໍາປາສັກ

ຈັນເພັນ ເຊື້ອພານິດ. (2538). ການປະເມີນຫລັກສູດສຶກສາສາດບັນດິດ (ຫລັກສູດປັບປຸງ ພສ 2538) ສາຂາມັດທະຍົມສຶກສາ.ລາຍງານການວິໃຈ ຄະນະສຶກສາສາດ ມະຫາວິທະຍາໄລຈຸລາລົງກອນ.

ໃຈທິບ ເຊື້ອຮັດນະພົງ. (2539). ການພັດທະນາຫລັກສູດ. ຫລັກການແລະແນວທາງການປະຕິບັດ ກຸງເທບມະຫານະຄອນ: ໂຮງພິມອະລີນເພຣດ.

ນະພະດົນ ໂປງອ້າຍ. (2548). ການປະເມີນຫລັກສູດວິສະວະກໍາສາດມະຫາບັນດິດ ສາຂາວິສະວະອຸດສະຫະການ. ບັນດິດວິທະຍາໄລ ມະຫາວິທະຍາໄລ ຊຽງໃຫມ່.

ນວນສະວີ ປະເສຣີຖະສຸກ. (2551). ລາຍງານການວິໃຈປະເມີນຫລັກສູດສິລະປະສາດມະຫາບັນດິດສາຂາວິຊາຈິດຕະວິທະຍາຊຸມຊົນ ມະຫາວິທະຍາໄລສີລະປະກອນ. ຄະນະສຶກສາສາດມະຫາວິທະຍາໄລ ສີລະປະກອນ.

ມາລຽມ ນິລະພັນ. (2554). ການປະເມີນຫລັກສູດທີ່ເນັ້ນການຕັດສິນໃຈໂດຍໃຊ້ວິທີທາງລະບົບໂດຍໃຊ້ຮູບແບບ CIPP Model. ຄູ່ມືການປະເມີນຫລັກສູດລະດັບບັນດິດ ບັນດິດວິທະຍາໄລ ມະຫາວິທະຍາໄລ ສີລະປະກອນ.

ອະນິດ ນີຣັນຕຣານົນ. (2535). ການປະເມີນຫລັກສູດປະລິນຍາຕີໃນວິທະຍານິພົນສຶກສາ. ວິທະຍານິພົນ. ຄະນະສຶກສາສາດ ມະຫາວິທະຍາໄລ ຂອນແກ່ນ.

ອະຣີສະຣາ ສີລິມຫາລາດ ແລະຄະນະ. (2549). ການປະເມີນຫລັກສູດປະກາສະນີຍະບັດທາງວິທະຍາສາດການແພດຄີນິກ ສາຂາທັນຕະກໍາສໍາລັບເດັກ. ພາກວິຊາທັນຕະກໍາສໍາລັບເດັກ ຄະນະທັນຕະແພດສາດ ມະຫາວິທະຍາໄລ ຊຽງໃຫມ່.

ສົມຖະວິນ ອິດສະວະສິບສະກຸນ. (2546). ການພັດທະນາ ແລະກວດສອບຄວາມຕົງຂອງຕົວບົ່ງຊີ້ສໍາຫລັບປະເມີນຫລັກສູດການຜະລິດຄູການສຶກສາຂັ້ນພື້ນຖານ ລະດັບປະລິນຍາຕີ (ຫລັກສູດ 5 ປີ) ວິທະຍານິພົນປະລິນຍາມະຫາບັນດິດ ພາກວິຊາວິໃຈການສຶກສາ ຄະນະສຶກສາສາດມະຫາວິທະຍາໄລ ຈຸລາລົງກອນ.

ສົມຫວັງ ພິທິຍານຸວັດ. (2544). ລວມບົດຄວາມການປະເມີນໂຄງການ. ກຸງເທບ: ສໍານັກພິມມະຫາວິທະຍາໄລ ຈຸລາລົງກອນ.

Anonthai and et all. (2540). Assessment of quality of graduated students in Khone Kaen University

Beauchamp, George A. (1981). The Curriculum of Elementary School. Boston: Allyn and Acon lnc.

Chan and et all. (2531). The quality of graduated students in Khone Kaen University Ministry of Education and Sports. (2009-2020). The strategies and higher education planning. Strategies of Planning in Developing Champasack University. (2010-2020).

Stufflebeam, D.L., et al. (1971). Educational Evaluation and Decision-Making. Itasca, Illinois: Peacock Publishing

Stufflebeam, D.L. and Shinkfield A. J. (2007). Evaluation theory, models & applications. CA: Jossey-Bass. The Summary of 10th years of Champasack University. (2014).

Wiles, J. Bondi, J. (2004). Supervision: A Guide to practice. Princeton: Pearson Education.